ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 238/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ມີນາ 2020

# ຂໍ້ຕົກລົງ
# ວ່າດ້ວຍນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID–19)

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງໃສ່ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19).

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດນະໂຍບາຍແກ້ໄຂຜົນກະທົບຈາກພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ໃຫ້ແກ່ລູກໜີ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ປ່ອຍກູ້ ຊຶ່ງໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດດັ່ງກ່າວ ໃຫ້ສາມາດສືບຕໍ່ດຳເນີນທຸລະກິດພາຍຫຼັງການລະບາດໄດ້ຖືກຄວບຄຸມ ຈົນກວ່າສະພາບເຂົ້າສູ່ປົກກະຕິ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ແລະ ນິຕິບຸກຄົນ ທີ່ເປັນລູກຄ້າເງິນກູ້ທີ່ໄດ້ຮັບຜົນກະທົບຈາກພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່, ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ທີ່ໄດ້ປ່ອຍກູ້ໃຫ້ລູກຄ້າດັ່ງກ່າວ.

**ມາດຕາ 3 ນະໂຍບາຍຕໍ່ລູກຄ້າເງິນກູ້**

1. ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ເລື່ອນເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມໃຫ້ລູກໜີ້ ຕາມທີ່ເຫັນວ່າເໝາະສົມ;
2. ສະໜອງເງິນກູ້ບ້ວງໃໝ່ ໃຫ້ແກ່ລູກໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ ເພື່ອຟື້ນຟູການຜະລິດ;



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

3. ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ໄດ້ປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບນະໂຍບາຍຜ່ອນຜັນຍົກເວັ້ນການປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 512/ທຫລ, ລົງວັນທີ 29/06/2018, ລະບຽບວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງສະຖາບັນການເງິນຈຸລະພາກ ສະບັບເລກທີ 02/ທຫລ, ລົງວັນທີ 04/02/2015 ແລະ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດ ສະບັບເລກທີ 03/ທຫລ, ລົງວັນທີ 20/06/2008 ດັ່ງນີ້:

(1) ການຈັດຊັ້ນໜີ້ພາຍຫຼັງການປັບປຸງໂຄງສ້າງ ແມ່ນໃຫ້ຮັກສາໄວ້ຊັ້ນເດີມ, ລູກໜີ້ທີ່ໄດ້ຮັບຜົນກະທົບ ທີ່ຖືກຈັດຊັ້ນເປັນໜີ້ຕ້ອງຮັບທວງຍາກ ແຕ່ວັນທີ 1 ມັງກອນ ປີ 2020 ເປັນຕົ້ນມາ ສາມາດຈັດຊັ້ນເປັນໜີ້ທີ່ຄວນເອົາໃຈໃສ່;

(2) ການປັບປຸງໂຄງສ້າງໜີ້ ແມ່ນສາມາດປະຕິບັດໄດ້ເກີນສອງຄັ້ງ;

(3) ທະນາຄານທຸລະກິດ ແລະ ສະຖາບັນການເງິນ ສາມາດປ່ອຍສິນເຊື່ອບ້ວງໃໝ່ ເພື່ອເປັນທຶນໝູນວຽນເສີມສະພາບຄ່ອງໃຫ້ລູກໜີ້ທີ່ໄດ້ຮັບຜົນກະທົບ ທີ່ຖືກຈັດຊັ້ນເປັນໜີ້ຕ້ອງຮັບທວງຍາກ ແຕ່ວັນທີ 1 ມັງກອນ ປີ 2020 ເປັນຕົ້ນມາ.

**ມາດຕາ 4 ມາດຕະການ**

ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ພິຈາລະນານຳໃຊ້ມາດຕະການຕ່າງໆ ຕໍ່ກັບລູກໜີ້ຜູ້ທີ່ໄດ້ຮັບຜົນກະທົບຕາມຄວາມເໝາະສົມເປັນແຕ່ລະກໍລະນີ ແລະ ສອດຄ່ອງກັບສະພາບຕົວຈິງຂອງລູກໜີ້ຂອງຕົນ ແລະ ຜູ້ໄດ້ຮັບຜົນກະທົບ ລາຍລະອຽດມີດັ່ງນີ້:

1. ປັບປຸງໂຄງສ້າງໜີ້ຄືນໃໝ່ໃຫ້ແກ່ລູກໜີ້ທີ່ໄດ້ຮັບຜົນກະທົບ ໂດຍກຳນົດອາຍຸສັນຍາ ຫຼື ງວດຊຳລະຕົ້ນທຶນ ແລະ ດອກເບ້ຍ, ອັດຕາດອກເບ້ຍ ຄືນໃໝ່ ໃຫ້ສອດຄ່ອງກັບຄວາມສາມາດໃນການຊຳລະໜີ້ຕົວຈິງຂອງລູກໜີ້. ໃນນັ້ນ, ໃຫ້ມີໄລຍະເວລາປອດໜີ້ ຕົ້ນທຶນ ແລະ ດອກເບ້ຍ ເປັນເວລາ 1 ປີ ຫຼື ຕາມການຕົກລົງລະຫວ່າງ ເຈົ້າໜີ້ ແລະ ລູກໜີ້;
2. ສະໜອງເງິນກູ້ບ້ວງໃໝ່ ໃຫ້ແກ່ລູກໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ;
3. ມາດຕະການອື່ນໆ ທີ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລະ ສັງລວມລາຍງານສະພາບການຈັດຕັ້ງປະຕິບັດມາດຕະການທີ່ກຳນົດ ໃຫ້ແກ່ຄະນະຜູ້ວ່າການຊາບເປັນແຕ່ລະເດືອນ ຢ່າງເປັນປົກກະຕິ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງດຳເນີນການສຳຫຼວດ, ເກັບກຳຂໍ້ມູນໃຫ້ລະອຽດໂດຍສົມທົບກັບຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປະເມີນຜົນກະທົບກ່ອນດຳເນີນການປັບປຸງສັນຍາ ແລະ ສະໜອງສິນເຊື່ອເພີ່ມ ພ້ອມທັງສ້າງລະບຽບພາຍໃນສະເພາະ ເພື່ອນຳໃຊ້ເປັນເອກະພາບໃນທົ່ວລະບົບຂອງຕົນ ໂດຍກຳນົດຂັ້ນຕອນ ແລະ ສຳນວນເອກະສານໃນການສະເໜີຂອງລູກໜີ້. ຫ້າມທະນາຄານທຸລະກິດ ແລະ ສະຖາບັນການເງິນ ນຳໃຊ້ບັນດາມາດຕະການຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ເພື່ອຫາຜົນປະໂຫຍດ, ເຊື່ອງອຳ ຫຼື ປົດບັງຄຸນນະພາບສິນເຊື່ອ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ຕ້ອງເອົາໃຈໃສ່ໃນການຕິດຕາມກວດກາສິນເຊື່ອທີ່ໄດ້ຮັບນະໂຍບາຍດັ່ງກ່າວຢ່າງໃກ້ຊິດ ແລະ ຕ້ອງລາຍງານມາຍັງກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ພາຍໃນວັນທີ 10 ຂອງແຕ່ລະເດືອນຕາມແບບຟອມທີ່ກຳນົດ.

ລູກໜີ້ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ແລະ ຜູ້ທີ່ໄດ້ຮັບຜົນກະທົບ ສາມາດສະເໜີຫາທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອພິຈາລະນາແກ້ໄຂ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບພາຍໃນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

**ສອນໄຊ ສິດພະໄຊ**